**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກົມອາຫານ ແລະ ຢາ

ໂທ: 021 214013-14

ເລກທີ 2523 /ກອຢ

ນະຄອນຫຼວງວຽງຈັນ, ວັນທີ 29 MAY 2024

# ໜັງສືແຈ້ງການ

**ເຖິງ:** ທ່ານຜູ້ອຳນວຍການບໍລິສັດສົ່ງອອກ- ນຳເຂົ້າຢາ ແລະ ຜະລິດຕະພັນການແພດ ແລະ ໂຮງງານຜະລິດຢາ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການເລີ່ມທົດລອງນຳໃຊ້ລະບົບອອນລາຍ LAOREG ສຳລັບການຂຶ້ນທະບຽນຜະລິດຕະພັນຢາຫຼວງ.

- ອີງຕາມ ຜົນໄດ້ຮັບຂອງການຝຶກອົບຮົມການນຳໃຊ້ລະບົບຂຶ້ນທະບຽນອອນລາຍສຳລັບຜະລິດຕະພັນຢາຫຼວງໃຫ້ແກ່ບໍລິສັດສົ່ງອອກ- ນຳເຂົ້າຢາ ແລະ ຜະລິດຕະພັນການແພດ ແລະ ໂຮງງານຜະລິດຢາໃນໄລຍະຜ່ານມາ;
- ອີງຕາມ ການຄົ້ນຄວ້າຂອງກົມອາຫານ ແລະ ຢາ.

ກົມອາຫານ ແລະ ຢາ ຂໍແຈ້ງມາຍັງບໍລິສັດສົ່ງອອກ-ນຳເຂົ້າຢາ ແລະ ຜະລິດຕະພັນການແພດ ແລະ ໂຮງງານຜະລິດຢາທີ່ມີຄວາມພ້ອມໃນການເລີ່ມທົດລອງນຳໃຊ້ລະບົບອອນລາຍ LAOREG ສຳລັບການຂຶ້ນທະບຽນຜະລິດຕະພັນຢາຫຼວງເຊິ່ງຈະເລີ່ມທົດລອງນຳໃຊ້ໃນວັນທີ 17 ມິຖຸນາ 2024. ການທົດລອງນຳໃຊ້ດັ່ງກ່າວ ແມ່ນເພື່ອຢັ້ງຢືນຄືນຄວາມພ້ອມ ແລະ ຄວາມໝັ້ນຄົງຂອງລະບົບ ເພື່ອການປັບປຸງເພີ່ມຕື່ມກ່ອນການປະກາດນຳໃຊ້ຢ່າງເປັນທາງການ. ສຳລັບບໍລິສັດ ແລະ ໂຮງງານທີ່ມີຄວາມພ້ອມ ສາມາດຍື່ນໜັງສືສະໝັກຂໍນຳໃຊ້ລະບົບ ມາຍັງກົມອາຫານ ແລະ ຢາ ພາຍໃນວັນທີ 10 ມິຖຸນາ 2024, ໃນໄລຍະທົດລອງການນຳໃຊ້ລະບົບ ເອກະສານຂໍອະນຸຍາດຂຶ້ນທະບຽນແມ່ນຈະຖືກພິຈາລະນາ, ອະນຸມັດຕາມຂັ້ນຕອນຕົວຈິງ ແລະ ມີຜົນນຳໃຊ້ຕາມລະບຽບການ.

ສຳລັບການສະໝັກຂໍນຳໃຊ້ລະບົບອອນລາຍແມ່ນອີງຕາມຂັ້ນຕອນ ແລະ ຄຳແນະນຳດັ່ງລຸ່ມນີ້:

**1. ການຂໍຊື່ຜູ້ໃຊ້ ແລະ ລະຫັດຜ່ານ**

ໃຫ້ຜູ້ປະກອບການເຮັດໜັງສືສະເໜີມາຍັງກົມອາຫານ ແລະ ຢາ ໂດຍແຕ່ງຕັ້ງພະນັກງານທີ່ຈະນຳໃຊ້ລະບົບ ແລະ ໃຫ້ປະກອບມີຂໍ້ມູນດັ່ງນີ້:

- ຊື່ເຕັມຂອງບໍລິສັດ, ທີ່ຢູ່ ແລະ ເບີໂທຕິດຕໍ່;
- ຊື່ເຕັມ, ເລກບັດປະຈຳຕົວ, ທີ່ຢູ່, ແລະ ອີເມວຂອງພະນັກງານແຕ່ລະທ່ານທີ່ຈະນຳໃຊ້ລະບົບນີ້ສຳລັບຂອບເຂດຂອງການຂໍອະນຸຍາດຂຶ້ນທະບຽນຜະລິດຕະພັນຢາຫຼວງ.

ຫຼັງຈາກທີ່ກົມອາຫານ ແລະ ຢາ ໄດ້ຮັບໜັງສືສະເໜີ ຈະດຳເນີນການປ້ອນຂໍ້ມູນຂອງບໍລິສັດລົງໃນລະບົບພາຍໃນ 5 ວັນລັດຖະການ, ໃຫ້ຜູ້ປະກອບການແຈ້ງພະນັກງານທີ່ໄດ້ແຕ່ງຕັ້ງດຳເນີນການຂໍບັນຊີຜູ້ໃຊ້ຜ່ານລະບົບອອນລາຍ LAOREG ຫຼັງຈາກ 5 ວັນ ທີ່ໄດ້ຍື່ນໜັງສືສະເໜີມາຍັງກົມອາຫານ ແລະ ຢາ.

ໝາຍເຫດ: ສໍາລັບຂໍ້ມູນເພີ່ມເຕີມໃນການຂໍຊື່ຜູ້ໃຊ້, ລະຫັດຜ່ານ ແລະ ການເຂົ້າລະບົບແມ່ນສາມາດເບິ່ງໄດ້ທີ່ຄູ່ມືແນະນໍາ ໂດຍການເຂົ້າໄປທີ່ເວັບໄຊກົມອາຫານ ແລະ ຢາ (www.fdd.gov.la), ໃນຫົວຂໍ້ຄູ່ມືຕ່າງໆ ເລືອກພະແນກຢາຫຼວງ ແລະ ອຸປະກອນການແພດ.

2. **ການຍື່ນເອກະສານ**

ສໍາລັບການຍື່ນເອກະສານກ່ຽວກັບການຂໍອະນຸຍາດຂຶ້ນທະບຽນຜະລິດຕະພັນຢາຫຼວງແມ່ນສົ່ງຜ່ານລະບົບອອນລາຍຄັ້ງດຽວ ໂດຍລວມຂັ້ນຕອນຂອງເອກະສານຟອມ 1 ແລະ 2 ເຂົ້າກັນ.

3. **ຊ່ອງທາງການຍື່ນເອກະສານ ແລະ ຂໍ້ຮຽກຮ້ອງດ້ານການປະກອບເອກະສານ**

- ສໍາລັບຜະລິດຕະພັນຢານໍາເຂົ້າ ແມ່ນໃຫ້ອີງຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນຄູ່ມືແນະນໍາສໍາລັບການຂຶ້ນທະບຽນຢາຫຼວງຜ່ານທາງລະບົບອອນລາຍ, ສ່ວນເອກະສານແມ່ນໃຫ້ອີງຕາມຂໍ້ຮຽກຮ້ອງທີ່ລະບຸຢູ່ໃນລະບົບ.
- ສໍາລັບຜະລິດຕະພັນຢາພາຍໃນແມ່ນໃຫ້ຍື່ນເອກະສານຜ່ານຊ່ອງທາງ MGENModern medicine, generic, full dossier,ສ່ວນຂໍ້ຮຽກຮ້ອງດ້ານເອກະສານ ແມ່ນໃຫ້ປະຕິບັດຕາມຜ່ານມາ.

4. **ການສົ່ງຕົວຢ່າງ**

- ສໍາລັບຜະລິດຕະພັນຢານໍາເຂົ້າໂດຍປົກກະຕິແລ້ວແມ່ນບໍ່ໄດ້ຮຽກຮ້ອງໃຫ້ສົ່ງຕົວຢ່າງ ແຕ່ອາດມີບາງກໍລະນີທີ່ຈະຕ້ອງໄດ້ສົ່ງຕົວຢ່າງ ເຊິ່ງທາງກົມອາຫານ ແລະ ຢາຈະລະບຸໄວ້ໃນຄໍາເຫັນຕອບກັບທີ່ຢູ່ໃນລະບົບ ສະເພາະໃນກໍລະນີຈໍາເປັນຕ້ອງສົ່ງຕົວຢ່າງ.
- ສໍາລັບຜະລິດຕະພັນຢາພາຍໃນແມ່ນຈະຕ້ອງສົ່ງຕົວຢ່າງເມື່ອເອກະສານຂອງທ່ານຖືກຕອບຮັບແລ້ວ ເຊິ່ງທ່ານສາມາດກວດຄືນໄດ້ທີ່ຊ່ອງ Accepted, ສໍາລັບຂໍ້ມູນເພີ່ມເຕີມທີ່ຈະແນະນໍາໃນການດໍາເນີນການຂັ້ນຕໍ່ໄປແມ່ນຈະລະບຸໄວ້ໃນອີເມວຕອບກັບໂດຍລະບົບ.

5. **ການຈ່າຍຄ່າບໍລິການ ແລະ ຄ່າທໍານຽມເອກະສານຂຶ້ນ/ຕໍ່ທະບຽນຢາ**

- ສໍາລັບຄ່າທໍານຽມ ແລະ ຄ່າບໍລິການແມ່ນອີງຕາມລັດຖະບັນຍັດຂອງປະທານປະເທດ ເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021.
- ສໍາລັບຜະລິດຕະພັນຢາຂໍຂຶ້ນທະບຽນໃໝ່ເມື່ອຍື່ນເອກະສານຄໍາຮ້ອງຜູ້ປະກອບການຕ້ອງເສຍຄ່າບໍລິການພິຈາລະນາເອກະສານ, ເມື່ອກົມອາຫານ ແລະ ຢາຮັບເອກະສານຄໍາຮ້ອງແລ້ວຜູ້ປະກອບການຕ້ອງຈ່າຍຄ່າທໍານຽມເຕັມຈໍານວນໃນຄັ້ງດຽວ (ເຖິງວ່າຜະລິດຕະພັນຢາຈະຖືກຮັບ ຫຼື ປະຕິເສດການຂຶ້ນທະບຽນກໍ່ຕາມ).
- ສໍາລັບການຕໍ່ທະບຽນຜະລິດຕະພັນຢາ ຜູ້ປະກອບການຕ້ອງຈ່າຍຄ່າບໍລິການ ແລະ ຄ່າທໍານຽມເຕັມຈໍານວນພ້ອມກັບການຍື່ນເອກະສານຄໍາຮ້ອງ.

6. **ຄ່າທໍານຽມໃນການໃຊ້ລະບົບ**

ສໍາລັບ 3 ປີທໍາອິດ (2024-2026) ຜູ້ປະກອບການຈະໄດ້ນໍາໃຊ້ລະບົບໂດຍບໍ່ເສຍຄ່າ, ແຕ່ຈະໄດ້ເສຍຄ່າສະໝັກນໍາໃຊ້ 50,000 ກີບ/1 ຜູ້ໃຊ້ (user). ພາຍຫຼັງລະບົບມີຄວາມໝັ້ນຄົງ, ຄາດຄະເນເລີ່ມແຕ່ປີ 2027 ຜູ້ປະກອບການຈະຕ້ອງໄດ້ປະກອບສ່ວນເສຍຄ່າທໍານຽມໃນການບໍາລຸງຮັກສາລະບົບ, ສໍາລັບລາຍລະອຽດແມ່ນຈະມີແຈ້ງການທາງການຕ່າງຫາກໃນໄລຍະຕໍ່ໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວຫາວົງ